PHU BIA MINING

# ຜູ້ອຳນວຍການໃຫຍ່ ແລະ ປະທານບໍລິຫານບໍລິສັດ ແພນອອສ໌ ພົບຄະນະລັດຖະບານ

## *PanAust MD and CEO meets with the Government of Laos*



ພະນະທ່ານ ພົນເອກ ຈັນສະໝອນ ຈັນຍາລາດ,
ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງ ປ້ອງກັນປະເທດ
*the Deputy Prime Minister and Minister of National Defence, His Excellency Mr Chansamone Chanyalath*



ພະນະທ່ານ ສອນໄຊ ສີພັນດອນ,
ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ
*the Deputy Prime Minister and Minister of Planning and Investment, His Excellency Mr Sonexay Siphandone*

ຕະຫຼອດເດືອນ ຕຸລາ, ດຣ ກຸນ ຢາງ -ຜູ້ອຳນວຍການໃຫຍ່ ແລະ ປະທານບໍລິຫານບໍລິສັດ ແພນອອສ໌ ເຊິ່ງເປັນບໍລິສັດ ແມ່ຂອງບໍລິສັດ ພູເບ້ຍ ມາຍນິງ ໄດ້ເດີນທາງຈາກ ອົດສະຕາລີ ແລະ ເຂົ້າພົບຄະນະລັດຖະບານຂັ້ນສູງຫຼາຍທ່ານ ໃນໄລຍະການຢ້ຽມຢາມລາວຫວ່າງບໍ່ດົນ.

ທ່າມກາງຂໍ້ຈຳກັດ ແລະ ຄວາມຫຍຸ້ງຍາກທີ່ເກີດຈາກການລະບາດຂອງໂຄວິດ-19 ຕໍ່ເນື່ອງໃນທົ່ວໂລກ, ດຣ ຢາງ ໄດ້ເຂົ້າພົບສົນທະນານຳ ພະນະທ່ານ ພົນເອກ ຈັນສະໝອນ ຈັນຍາລາດ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງ ປ້ອງກັນປະເທດ; ພະນະທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ; ພະນະທ່ານ ນາງ ບຸນຄຳ ວໍລະຈິດ, ລັດຖະມົນຕີກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີກະຊວງ ພະລັງງານ ແລະ ບໍ່ແຮ່; ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ທ່ານ ຄຳລຽງ ອຸທະໄກສອນ, ເຈົ້າແຂວງໆ ໄຊສົມບູນ ແລະ ທ່ານ ບຸນຈັນ ສີວົງພັນ, ເຈົ້າແຂວງໆ ຊຽງຂວາງ.

ໃນການພົບປະທີ່ຜ່ານມາ ທ່ານ ເຫວິນ ຟູ ຫວາງ, ຜູ້ອຳນວຍການໃຫຍ່ບໍລິສັດ ພູເບ້ຍ ມາຍນິງ ຍັງເຂົ້າຮ່ວມພ້ອມພຽງກັນ ແລະ ດຣ ຢາງ ໄດ້ສະແດງຄວາມຮູ້ບຸນຄຸນຕໍ່ລັດຖະບານ ລາວສຳລັບການສະໜັບສະໜູນອັນຕໍ່ເນື່ອງທີ່ມີຕໍ່ບໍລິສັດ ພູເບ້ຍ ມາຍນິງ ແລະ ບໍລິສັດ ແພນອອສ໌.

ການພົບປະ ຍັງເປີດໂອກາດໃຫ້ ດຣ ຢາງ ປຶກສາຫາລືນຳລັດຖະບານ ລາວຊາບວ່າ ບໍລິສັດ ແພນອອສ໌ ຍັງຄົງມຸ້ງໝັ້ນສ້າງຄວາມເຕີບໃຫຍ່ ແລະ ຄວາມວັດທະນະຖາວອນໃນປະເທດສືບຕໍ່ໄປຜ່ານການດຳເນີນງານປະຈຸບັນຂອງບໍລິສັດ ແລະ ບໍລິສັດມີຄວາມສົນໃຈປຶກສາຫາລືໂອກາດ ໃນການ ພັດທະນາ ແລະ ການຂະຫຍາຍທຸລະກິດຕໍ່ໜ້າທີ່ບໍລິສັດ ກຳລັງຈັດຕັ້ງໃນລາວ.

ດຣ ຢາງຍັງກ່າວເຖິງວິທີດຳເນີນທຸລະກິດຂອງບໍລິສັດ ແພນອອສ໌ ແລະ ບໍລິສັດ ພູເບ້ຍ ມາຍນິງ ພາຍໃຕ້ລັດວິສາຫະກິດຂອງຈີນ, ກຸ່ມລັດວິສາຫະກິດ ກວາງດົງ ຣາຍຊິງ ໂຮນດິ້ງ ຈຳກັດ, ເຊິ່ງສ້າງຄວາມເຂັ້ມແຂງໃຫ້ເສັ້ນທາງບັນລຸໝາກຜົນໃນການດຳເນີນທຸລະກິດໃນລາວ ແລະ ມີບາດກ້າວທີ່ດີໃນຕໍ່ໜ້າ.

ດຣ ຢາງ ກ່າວວ່າ: "ຜູ້ຖືຮຸ້ນຂອງບໍລິສັດ ແພນອອສ໌ ຍັງຄົງໃຫ້ການສະໜັບສະໜູນການດຳເນີນທຸລະກິດໃນລາວຫຼາຍຍິ່ງຂຶ້ນ ແລະ ເປັນວິໄສທັດຂອງບໍລິສັດ ເພື່ອສືບຕໍ່ດຳເນີນທຸລະກິດຢູ່ລາວ ໃນໄລຍະຍາວ ຜ່ານການພັດທະນາໂອກາດໃໝ່ໆເພື່ອຜົນປະໂຫຍດ ດ້ານການຄ້າຮ່ວມກັນ ທັງສອງຝ່າຍ. ເປັນສິ່ງໜ້າຕື່ນເຕັ້ນແມ່ນ ໂອກາດທີ່ບົ່ງຊ້ອນເຫຼົ່ານີ້ ຈະຊ່ວຍພັດທະນາເສດຖະກິດຂອງລາວ ແລະ ສ້າງໄລຍະໃໝ່ແຫ່ງຄວາມວັດທະນະ ຖາວອນສຳລັບປະເທດຊາດ.

ໃນຕອນທ້າຍ, ດຣ ຢາງ ຂໍຂອບໃຈມາຍັງລັດຖະບານ ລາວ ສຳລັບການຕ້ອນຮັບອັນອົບອຸ່ນໃນໄລຍະການຢ້ຽມຢາມລາວຂອງທ່ານຜູ້ອຳນວຍການໃຫຍ່. ດຣ ຢາງ ຍັງສົ່ງຄຳຂອບໃຈມາຍັງຄະນະຮັບຝ່າຍບໍລິສັດ ພູເບ້ຍ ມາຍນິງໃນໄລຍະການຢ້ຽມຢາມຄັ້ງນີ້ ແລະ ເປັນການຢັ້ງຢືນວ່າບໍລິສັດ ແພນອອສ໌ ແລະ ລັດວິສາຫະກິດຂອງຈີນ ຈະສືບຕໍ່ສະໜັບສະໜູນບໍລິສັດ ພູເບ້ຍ ມາຍນິງ, ລັດຖະບານ ແລະ ປະຊາຊົນລາວໃນໄລຍະການລະບາດຂອງໂຄວິດ-19.

ດຣ ຢາງ ກ່າວຕື່ມວ່າ: "ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຄວາມນັບຖືຈາກໃຈມາຍັງທຸກຄົນທີ່ໄດ້ຕ້ອນຮັບຂ້າພະເຈົ້າຢູ່ລາວ. ໃນບໍລິສັດ ແພນອອສ໌, ບູລິມະສິດອັນດັບໜຶ່ງຂອງບໍລິສັດແມ່ນ ສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີພາບຂອງແຮງງານທັງໝົດແລະ ຊຸມຊົນຂອງບໍລິສັດ. ຜູ້ຖືຮຸ້ນລັດວິສາຫະກິດຂອງຈີນ ກໍ່ມີຄວາມມຸ້ງໝັ້ນອັນດຽວກັນ ແລະ ຈະສືບຕໍ່ສະໜັບສະໜູນພະນັກງານຂອງບໍລິສັດ ແລະ ຄູ່ຮ່ວມມືເບື້ອງລັດຖະບານໃນລາວ."

*Throughout October, Dr Qun Yang – MD and CEO of Phu Bia Mining's parent Company, PanAust Limited – met with a number of high ranking Government of Laos officials during his recent visit from Australia.*

*Despite restrictions and difficulties posed by the ongoing global COVID-19 pandemic, Dr Yang held face-to-face meetings with: the Deputy Prime Minister and Minister of National Defence, His Excellency Mr Chansamone Chanyalath; the Deputy Prime Minister and Minister of Planning and Investment, His Excellency Mr Sonexay Siphandone; the Minister of Natural Resources and Environment, Her Excellency Madam Bounkham Vorachit; the Vice Minister of Energy and Mines, Mr Thongphat Inthavong; the Deputy Head of the Prime Minister's Office, Madam Thipphakone Chanthavongsa; Xaisomboun Governor, Mr Khamlieng Outthakaisone; and Xieng Khouang Governor, Mr Bounchanh Sivongphanh.*

*Phu Bia Mining's Managing Director, Mr Wen fu Wang accompanied Dr Yang at all meetings where he was able to express his gratitude to the Government of Laos for their ongoing support to Phu Bia Mining and PanAust.*



ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
*the Deputy Head of the Prime Minister's Office, Madam Thipphakone Chanthavongsa*



ພະນະທ່ານ ນາງ ບຸນຄຳ ວໍລະຈິດ, ລັດຖະມົນຕີກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
*the Minister of Natural Resources and Environment, Her Excellency Madam Bounkham Vorachit*



ທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີກະຊວງ ພະລັງງານ ແລະ ບໍ່ແຮ່
*the Vice Minister of Energy and Mines, Mr Thongphat Inthavong*

*The meetings also afforded Dr Yang the opportunity to personally advise the Government of Laos that PanAust remains committed to the ongoing growth and prosperity of the nation through its current Operations and enthusiastically discussed the future growth and development opportunities the Company is actively pursuing in Laos.*

*Dr Yang also spoke about how PanAust and Phu Bia Mining's ownership through Chinese state-owned enterprise, Guangdong Rising Holdings Group Co. Ltd., solidifies a pathway to achieve these outcomes in Laos now and well into the future.*

*"Our shareholder remains very supportive of our business in Laos and of our vision to remain in country for the long term through the development of new opportunities for mutually beneficial commercial outcomes. Excitingly, these potential opportunities will help grow Laos' economy and usher in a new era of prosperity for the nation.*

*In closing, Dr Yang thanked the Government of Laos for welcoming him during his visit to their country. He also extended his warmest regards to the entire Phu Bia Mining team for their hospitality during his visit and reiterated PanAust and its shareholder will continue to support Phu Bia Mining and the Government and people of Laos during the ongoing COVID-19 pandemic.*

*"I wish to extend my heartfelt gratitude and appreciation to everyone who has welcomed me to Laos. At PanAust, our number one priority is the health, safety and wellbeing of our entire workforce and our communities. Our shareholder shares this commitment and we will continue to support our people and our Government partners here in Laos," Dr Yang said.*